**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງການຕ່າງປະເທດ

ກົມອາຊຽນ

ເລກທີ: 523 /ອຊ

ນະຄອນຫລວງວຽງຈັນ, ວັນທີ 30 ເມສາ 2024

# ໜັງສືແຈ້ງເຊີນການປະມູນຈັດຊື້-ຈັດຈ້າງ

ເຖິງ: ບັນດາບໍລິສັດລະບົບເຄື່ອງສຽງຫ້ອງປະຊຸມ.

ເລື່ອງ: ເຊີນເຂົ້າຮ່ວມຍື່ນຊອງປະມູນສະໜອງລະບົບເຄື່ອງສຽງຫ້ອງປະຊຸມເພື່ອຮັບໃຊ້ກອງປະຊຸມລັດຖະມົນຕີຕ່າງປະເທດອາຊຽນ ຄັ້ງທີ 57 ແລະ ກອງປະຊຸມລັດຖະມົນຕີທີ່ກ່ຽວຂ້ອງ ໃນວັນທີ 21-27 ກໍລະກົດ 2024.

- ອີງຕາມການເຫັນດີຂອງ ຄະນະນຳກະຊວງການຕ່າງປະເທດ ຄັ້ງວັນທີ 4 ເມສາ 2024.

ກົມອາຊຽນ ຂໍຖືເປັນກຽດຮຽນເຊີນມາຍັງບັນດາບໍລິສັດ ທີ່ມີຄວາມສົນໃຈ, ມີອຸປະກອນພຽງພໍ ແລະ ໄດ້ມາດຕະຖານ ແລະ ມີປະສົບປະການຮັບໃຊ້ກອງປະຊຸມລະດັບຊາດ ແລະ ສາກົນ ເຂົ້າຮ່ວມການປະມູນຈັດຊື້-ຈັດຈ້າງ ສະໜອງລະບົບເຄື່ອງສຽງຫ້ອງປະຊຸມເພື່ອຮັບໃຊ້ກອງປະຊຸມລັດຖະມົນຕີຕ່າງປະເທດອາຊຽນ ຄັ້ງທີ 57 ແລະ ກອງປະຊຸມລັດຖະມົນຕີທີ່ກ່ຽວຂ້ອງ, ຊຶ່ງຈະຈັດຂຶ້ນໃນວັນທີ 21-27 ກໍລະກົດ 2024 ທີ່ ຫໍປະຊຸມແຫ່ງຊາດ, ນະຄອນຫຼວງວຽງຈັນ.

ການປະມູນຈະດຳເນີນຕາມຂັ້ນຕອນການສົມທຽບລາຄາ ທີ່ໄດ້ກຳນົດໄວ້ຢູ່ໃນກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017 ແລະ ຄຳແນະນຳ ກ່ຽວກັບການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019. ບໍລິສັດທີ່ມີຄວາມສົນໃຈ ສາມາດຕິດຕໍ່ພົວພັນທີ່ ກົມອາຊຽນ, ກະຊວງການຕ່າງປະເທດ ຕາມໂມງລັດຖະການ (ຊັ້ນ 4, ຕຶກ B, ໂທລະສັບ: 021-415109) ຕັ້ງຢູ່: ຖະໜົນ 23 ສິງຫາ, ບ້ານ: ໂພນໄຊ, ເມືອງ: ໄຊເສດຖາ, ນະຄອນຫລວງວຽງຈັນ ເລີ່ມແຕ່ວັນທີ 3 ພຶດສະພາ 2024 ເປັນຕົ້ນໄປ.

ຊອງປະມູນຕ້ອງສົ່ງໃຫ້ກົມອາຊຽນ, ກະຊວງການຕ່າງປະເທດ ຊ້າສຸດ ບໍ່ໃຫ້ກາຍ ເວລາ 09:00 ໂມງ ຂອງວັນທີ 22 ພຶດສະພາ 2024. ຊອງປະມູນທີ່ສົ່ງມາທາງເອເລັກໂຕຼນິກຈະບໍ່ຮັບພິຈາລະນາ ແລະ ຊອງປະມູນທີ່ສົ່ງຊ້າກວ່າເວລາທີ່ກຳນົດໄວ້ຈະບໍ່ຮັບເອົາ ແລະ ຈະສົ່ງຄືນ ໂດຍບໍ່ມີການເປີດຊອງ. ທຸກໆຊອງປະມູນຈະໄດ້ເປີດໃນເວລາ 09:30 ໂມງ ຂອງວັນທີ 22 ພຶດສະພາ 2024 ທີ່ ຫ້ອງປະຊຸມກົມອາຊຽນ ຊັ້ນ 4, ຕຶກ B, ກະຊວງການຕ່າງປະເທດ ໂດຍຊ້ອງໜ້າຄະນະກຳມະການປະມູນ ແລະ ຕົວແທນຂອງຜູ້ປະມູນທີ່ສົນໃຈເຂົ້າຮ່ວມນຳ.

ທຸກຊອງປະມູນຕ້ອງໄດ້ປະກອບໜັງສືຄ້ຳປະກັນການປະມູນ ຫລື ໜັງສືຄ້ຳປະກັນການປະມູນຈາກທະນາຄານ ຊຶ່ງມູນຄ່າຂອງການຄ້ຳປະກັນບໍ່ໃຫ້ຫລຸດ 2% (ສ່ວນຮ້ອຍ) ຂອງລາຄາປະມູນ ຫຼື ໃບແຊັກທະນາຄານມາພ້ອມ.

**ເຊັນແທນ ຫົວໜ້າກົມ**

**ຮອງຫົວໜ້າກົມ**

ແສງພະອາທິດ ສະນຸກາຜົນ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການຕ່າງປະເທດ

ກົມອາຊຽນ

ເລກທີ: 522 /ອຊ

ນະຄອນຫລວງວຽງຈັນ, ວັນທີ 30 ເມສາ 2024

# ເງື່ອນໄຂ ແລະ ຄໍາແນະນໍາສໍາລັບຜູ້ເຂົ້າຮ່ວມປະມູນຈັດຊື້-ຈັດຈ້າງ

- ອີງຕາມກົດໝາຍ ວ່າດ້ວຍ ການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017 ແລະ ຄໍາແນະນໍາ ກ່ຽວກັບ ການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019.

ບໍລິສັດທີ່ເຂົ້າຮ່ວມການປະມູນສະໜອງລະບົບເຄື່ອງສຽງຫ້ອງປະຊຸມເພື່ອຮັບໃຊ້ກອງປະຊຸມລັດຖະມົນຕີຕ່າງປະເທດອາຊຽນ ຄັ້ງທີ 57 ແລະ ກອງປະຊຸມລັດຖະມົນຕີທີ່ກ່ຽວຂ້ອງ, ຊຶ່ງຈະຈັດຂຶ້ນໃນວັນທີ 21-27 ກໍລະກົດ 2024 ທີ່ ຫໍປະຊຸມແຫ່ງຊາດ, ນະຄອນຫຼວງວຽງຈັນ ແມ່ນຕ້ອງມີເງື່ອນໄຂ ດັ່ງລຸ່ມນີ້:

<u>ເງື່ອນໄຂທົ່ວໄປ</u>

1. ຕ້ອງມີໃບທະບຽນວິສາຫະກິດ ແລະ ມີທຶນຈົດທະບຽນ 300 ລ້ານກີບ ຂຶ້ນໄປ;
2. ຕ້ອງມີໃບອະນຸຍາດດໍາເນີນທຸລະກິດຕາມລະບຽບກົດໝາຍຂອງ ສປປ ລາວ;
3. ມີໃບທະບຽນອາກອນ ຫຼື ໃບຢັ້ງຢືນຊໍາລະອາກອນທີ່ໃຊ້ໄດ້ເຖິງສົກປີ 2023 ຫຼື 2022;
4. ມູນຄ່າລວມສິນຄ້າທີ່ສະເໜີມາໃນຊອງປະມູນຕ້ອງເປັນເງິນກີບ ແລະ ລວມພາສີອາກອນຕ່າງໆ;
5. ຕ້ອງມີໃບຢັ້ງຢືນຖານະທາງການເງິນຂອງບໍລິສັດ 300 ລ້ານກີບ ຂຶ້ນໄປ ພາຍໃນ 01 ປີ. (ຢັ້ງຢືນບັນຊີສໍາຮອງຈາກທະນາຄານ);
6. ຕ້ອງມີເງິນຄໍ້າຊອງປະມູນ 2% ຂອງມູນຄ່າ (ແບງກາລັງຕີ);
7. ບໍລິສັດຕ້ອງມີອຸປະກອນທີ່ໄດ້ມາດຕະຖານ, ມີຈໍານວນຄົບຖ້ວນ ແລະ ປະສົບການຮັບໃຊ້ກອງປະຊຸມລະດັບຊາດ ແລະ ສາກົນ ມາກ່ອນ ຢ່າງໜ້ອຍ 02 ປີ;
8. ບໍລິສັດຕ້ອງສະໜອງລະບົບເຄື່ອງສຽງຫ້ອງປະຊຸມ ຈໍານວນ 3 ຫ້ອງ ໂດຍປະກອບມີອຸປະກອນ ຄື: ໄມຕັ້ງໂຕະປະຊຸມ ຍີ່ຫໍ້ bose ຈໍານວນ 45 ຊຸດຢ່າງຕໍ່າ, ລະບົບລໍາໂພງ ແລະ ມິກເຊີ ຍີ່ຫໍ້ bose ຈໍານວນ 20 ຄູ່, ຈໍແອວອີດີ ຂະໜາດ 4x8 ແມັດ ຈໍານວນ 2 ຊຸດ, ກ່ອງອັດຕາໂນມັດ ຈໍານວນ 10 ຄູ່, ລະບົບແສງສໍາລັບຖ່າຍພາບ ຈໍານວນ 3 ຊຸດ, ລະບົບຖ່າຍພາບ ແລະ ສຽງ ຈາກຫ້ອງປະຊຸມໄປຍັງຫ້ອງຟັງສຽງ ຈໍານວນ 2 ຫ້ອງ ພ້ອມດ້ວຍຫູຟັງ ຈໍານວນ 600 ຊຸດ ແລະ ອຸປະກອນເສີມຕ່າງໆແບບຄົບວົງຈອນ ແລະ ຕ້ອງມີເຄື່ອງພ້ອມກ່ອນວັນທີ 28 ມິຖຸນາ 2024 ຫຼັງຈາກເຊັນສັນຍາ;
9. ຊອງປະມູນຕ້ອງແຍກອອກເປັນ 02 ຊອງ ຄື: 1. ຊອງເຕັກນິກ ແລະ 2 ຊອງລາຄາ (ກາແດງ 01 ຊຸດ ແລະ ກອບປີ້ 01 ຊຸດ).
10. ຕ້ອງເປັນບໍລິສັດທີ່ບໍ່ຖືກດໍາເນີນຄະດີໃນ ສປປ ລາວ.

ດັ່ງນັ້ນ, ຈຶ່ງກໍານົດເງື່ອນໄຂ ແນະນໍາຜູ້ທີ່ຈະເຂົ້າຮ່ວມການປະມູນລາຄາຂ້າງເທິງນັ້ນ.

ເຊັນແທນ ຫົວໜ້າກົມ
ຮອງຫົວໜ້າກົມ

ແສງພະອາທິດ ສະນຸກຜົນ